ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
**********************

ກະຊວງໄປສະນີ,
ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ: 023 /ປທສ.
ນະຄອນຫຼວງວຽງຈັນ, ວັນທີ 08 JAN 2015

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງເລກໝາຍໂທລະສັບ

- ອີງຕາມກົດໝາຍວ່າດ້ວຍການໂທລະຄົມມະນາຄົມ(ສະບັບປັບປຸງ), ສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ສະບັບເລກທີ 303/ນຍ, ລົງວັນທີ 26/9/2011.

## ລັດຖະມົນຕີວ່າການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງ:

## ໝວດທີ1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງ ສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ, ກວດກາ ການບໍລິການ ແລະ ການນຳໃຊ້ເລກໝາຍໂທລະສັບ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ ຊຸກຍູ້ສົ່ງເສີມການນຳໃຊ້ໃຫ້ຖືກຕ້ອງຕາມລະບຽບການ ແລະ ປະກອບສ່ວນເຂົ້າໃນການສ້າງສາ ພັດທະນາປະເທດຊາດ.

**ມາດຕາ 2. ເລກໝາຍໂທລະສັບ**

ເລກໝາຍໂທລະສັບ ແມ່ນ ຊັບພະຍາກອນໂທລະຄົມມະນາຄົມ ທີ່ຕ້ອງໄດ້ຄຸ້ມຄອງ ແລະ ອອກອະນຸຍາດນຳໃຊ້ ໂດຍ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ເລກໝາຍໂທລະສັບ ໝາຍເຖິງ ຕົວເລກທີ່ມີຄວາມໝາຍບົ່ງບອກເຖິງ ລະຫັດປະເທດ, ແຂວງ ລະຫັດເຄືອຂ່າຍໂທລະຄົມມະນາຄົມ ແລະ ເລກໝາຍຂອງຜູ້ໃຊ້ບໍລິການ;
2. ເລກໝາຍໂທລະສັບພິເສດ ໝາຍເຖິງ ເລກໝາຍໂທລະສັບສາມ ຫຼື ສີ່ຕົວເລກ ເປັນເລກໝາຍໂທລະສັບປະເພດໜຶ່ງ ທີ່ກຳນົດເປັນເລກໝາຍພິເສດ ຊຶ່ງ ຂຶ້ນຕົ້ນດ້ວຍຕົວເລກໜຶ່ງ(1) ທີ່ກຳນົດໄວ້ໃນແຜນຈັດສັນເລກໝາຍໂທລະສັບພິເສດ ແລະ ລະບຽບການ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
3. ເລກໝາຍເຄືອຂ່າຍໂທລະຄົມມະນາຄົມ ໝາຍເຖິງ ລະຫັດເຄືອຂ່າຍໂທລະສັບ ຂອງ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທີ່ໃຫ້ບໍລິການໂທລະສັບຕັ້ງໂຕະໃຊ້ສາຍ, ໂທລະສັບຕັ້ງໂຕະບໍ່ໃຊ້ສາຍ ແລະ ໂທລະສັບມືຖື;
4. ແຜນເລກໝາຍໂທລະຄົມມະນາຄົມ ແຫ່ງຊາດ ໝາຍເຖິງ ແຜນການນຳໃຊ້ລະຫັດໂທລະຄົມມະນາຄົມ, ເລກໝາຍໂທລະສັບລະບົບຕ່າງໆໃນປະຈຸບັນ ແລະ ໃນຊຸມປີຂ້າງໜ້າ ເຊິ່ງລວມເຖິງ ໂຄງສ້າງ, ການຈັດສັນ ແລະ ສະຖານທີ່ ຂອງ ສປປ ລາວ;
5. ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ໝາຍເຖິງ ບໍລິສັດທີ່ໄດ້ຮັບອະນຸຍາດ ດຳເນີນທຸລະກິດບໍລິການໂທລະຄົມມະນາຄົມໃຫ້ແກ່ສາທາລະນະຊົນ;
6. ຜູ້ຊົມໃຊ້ເລກໝາຍໂທລະສັບ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ລົງທະບຽນນຳໃຊ້ ຫຼື ເຈົ້າຂອງເລກໝາຍໂທລະສັບ ຈາກ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
7. ຄັງເລກໝາຍໂທລະສັບ ( ຄັງສຳຮອງ ) ໝາຍເຖິງ ຕາຕະລາງແຜນການຈັດສັນ ກຳນົດການນຳໃຊ້ເລກໝາຍໂທລະສັບ ເພື່ອຮອງຮັບ ແລະ ຕອບສະໜອງການຂະຫຍາຍຕົວຂອງການນຳໃຊ້ເລກໝາຍໂທລະສັບທັງປະຈຸບັນ ແລະ ໃນອະນາຄົດ.

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ຜູ້ຊົມໃຊ້ເລກໝາຍໂທລະສັບ ໃນຂອບເຂດ ທົ່ວປະເທດ

## ໝວດທີ 2
## ການຄຸ້ມຄອງ ແລະ ການນຳໃຊ້ເລກໝາຍໂທລະສັບ

**ມາດຕາ 5. ການຄຸ້ມຄອງເລກໝາຍໂທລະສັບ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອະນຸຍາດນຳໃຊ້ເລກໝາຍໂທລະສັບ ໃຫ້ຜູ້ບໍລິການໂທລະຄົມມະນາຄົມ ໃນ ສ ປປລາວ.

**ມາດຕາ 6. ການອະນຸຍາດບໍລິການນຳໃຊ້ເລກໝາຍໂທລະສັບ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທີ່ມີຈຸດປະສົງບໍລິການນຳໃຊ້ເລກໝາຍໂທລະສັບ ແມ່ນຕ້ອງເຮັດໜັງສືສະເໜີ ພ້ອມລາຍງານຂໍ້ມູນລາຍລະອຽດ ຫາ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເຊິ່ງປະກອບມີດັ່ງນີ້:

1. ບົດສະຫຼຸບລາຍງານການບໍລິການເລກໝາຍໂທລະສັບທຸກລະບົບ ປະຈຳປີ;

2. ຈຳນວນເລກໝາຍໂທລະສັບທຸກລະບົບ ທີ່ໄດ້ຮັບອະນຸຍາດ ຈາກ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

3. ຈຳນວນເລກໝາຍທີ່ເປີດນຳໃຊ້ບໍລິການປົກກະຕິ, ຈຳນວນເລກໝາຍທີ່ຍັງບໍ່ທັນໄດ້ເປີດບໍລິການນຳໃຊ້ ແລະ ຄວາມອາດສາມາດຮອງຮັບເລກໝາຍໂທລະສັບທຸກລະບົບ;

4. ຄາດຄະເນແຜນການສຳລັບການນຳໃຊ້ເລກໝາຍໂທລະສັບທຸກລະບົບ ຂອງ ບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທີ່ສະເໜີຂໍອະນຸຍາດນຳໃຊ້.

**ມາດຕາ 7. ການອະນຸຍາດນຳໃຊ້ເລກໝາຍໂທລະສັບ**

1. ເລກໝາຍໂທລະສັບທົ່ວໄປ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການນຳໃຊ້ເລກໝາຍໂທລະສັບທົ່ວໄປ ແມ່ນໃຫ້ ຂຶ້ນທະບຽນນຳໃຊ້ ຢູ່ບ່ອນໃຫ້ບໍລິການ ຫຼື ສາຂາຕົວແທນ ຂອງ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ພ້ອມທັງປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;

ສຳລັບ ການຂຶ້ນທະບຽນເລກໝາຍໂທລະສັບ ແມ່ນໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

ສຳລັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີຄວາມປະສົງ ຈະສົ່ງຄືນເລກໝາຍໂທລະສັບທຸກລະບົບ ໃຫ້ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແມ່ນໃຫ້ສົ່ງຄືນເລກໝາຍໂທລະສັບເປັນຈຳນວນຫຼັກຄົບຖ້ວນ;

2. ເລກໝາຍໂທລະສັບພິເສດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການນຳໃຊ້ເລກໝາຍໂທລະສັບພິເສດ ແມ່ນຕ້ອງໄດ້ຮັບອະນຸຍາດ ຈາກ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ພິຈາລະນາ ຕາມເງື່ອນໄຂ ແລະ ຄວາມຈຳເປັນ ສອດຄ່ອງກັບ ແຜນການຈັດສັນ ກຳນົດ ການນຳໃຊ້ເລກໝາຍໂທລະສັບພິເສດ.

2.1 ຂອບເຂດການນຳໃຊ້ເລກໝາຍໂທລະສັບພິເສດ

ເລກໝາຍໂທລະສັບພິເສດສາມຕົວເລກ ແມ່ນນຳໃຊ້ສະເພາະໃນວຽກງານສຸກເສີນ ແລະ ວຽກງານອັນສຳຄັນ ຂອງ ລັດຖະບານ, ຕາມແຜນຈັດສັນ ແລະ ກຳນົດ ການນຳໃຊ້ເລກໝາຍໂທລະສັບພິເສດ ຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດການນຳໃຊ້ເລກໝາຍພິເສດສາມ ແລະ ສີ່ຕົວເລກ ທີ່ນຳໃຊ້ໃນວຽກງານທີ່ຄ້າຍຄືກັນ ແມ່ນໃຫ້ນຳໃຊ້ເລກໝາຍໂທລະສັບສາມຕົວເລກ ຫຼື ສີ່ຕົວເລກ ທີ່ຄ້າຍຄືກັນ ເພື່ອຄວາມເປັນເອກະພາບ ແລະ ເປັນການປະຢັດການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ( ເລກໝາຍໂທລະສັບ );

ເລກໝາຍໂທລະສັບພິເສດສີ່ຕົວເລກ ແມ່ນນຳໃຊ້ໃນວຽກງານສຸກເສີນ, ວຽກງານທີ່ສຳຄັນ ແລະ ມີຄວາມຈຳເປັນ ຂອງພາກລັດ, ວຽກງານມູນນິທິຕ່າງໆ, ວຽກງານຕ້ານ ແລະ ສະກັດກັ້ນໄພພິບັດ, ວຽກງານບໍລິການ ຂອງ ບໍລິສັດ ລັດວິສາຫະກິດ ທີ່ໄດ້ປະກອບສ່ວນຊຸກຍູ້ສົ່ງເສີມສັງຄົມ ແລະ ວຽກງານຮັບໃຊ້ໃຫ້ແກ່ສາທາລະນະ ຕາມແຜນຈັດສັນ ກຳນົດ ນຳໃຊ້ເລກໝາຍໂທລະສັບພິເສດ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

ຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ ທີ່ນຳໃຊ້ເລກໝາຍໂທລະສັບສາມຕົວເລກ ຫຼື ສີ່ຕົວເລກ ໃນວຽກງານ ແລະ ການບໍລິການພາຍໃນຂອງບໍລິສັດທີ່ຄ້າຍຄືກັນ ແມ່ນໃຫ້ນຳໃຊ້ເລກໝາຍທີ່ຄືກັນ.

**ມາດຕາ 8. ຮູບແບບຂອງເລກໝາຍໂທລະສັບ**

ຮູບແບບ ຂອງ ເລກໝາຍໂທລະສັບ ໃນ ສປປ ລາວ ແມ່ນປະຕິບັດຕາມແຜນເລກໝາຍໂທລະສັບ ແຫ່ງຊາດ ຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ສອດຄ່ອງກັບບົດແນະນຳ ຂອງ ສະຫະພາບໂທລະຄົມມະນາຄົມສາກົນ ( International Telecommunication Union ຫຼື ITU )

## ໝວດທີ 3
## ຄັງສຳຮອງ ແລະ ການວາງແຜນຈັດສັນນຳໃຊ້ເລກໝາຍໂທລະສັບ

**ມາດຕາ 9. ຄັງສຳຮອງ**

ການວາງແຜນຄັງສຳຮອງເລກໝາຍໂທລະສັບ ແມ່ນ ການວາງແຜນເລກໝາຍໂທລະສັບ ເພື່ອຮັບປະກັນໃຫ້ພຽງພໍ ແລະ ສາມາດຕອບສະໜອງໄດ້ຕາມການຂະຫຍາຍຕົວໃນອະນາຄົດ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ຜູ້ນຳໃຊ້ເລກໝາຍໂທລະສັບ ທີ່ຈະນຳໃຊ້ໃນໄລຍະຍາວ ໃນຂອບເຂດທົ່ວປະເທດ .

**ມາດຕາ 10. ການວາງແຜນຈັດສັນນຳໃຊ້ເລກໝາຍໂທລະສັບ**

ການວາງແຜນຈັດສັນ, ກຳນົດການນຳໃຊ້ຊັບພະຍາກອນໂທລະຄົມ (ເລກໝາຍໂທລະສັບ) ແມ່ນ ກະຊວງ ໄປສະນີ,ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຈັດສັນ, ອະນຸຍາດນຳໃຊ້ ແລະ ວາງແຜນການນຳໃຊ້ເລກໝາຍໂທລະສັບ ໂດຍອີງໃສ່ຂໍ້ມູນ ຂອງ ແຜນເລກໝາຍໂທລະຄົມມະນາຄົມ ແຫ່ງຊາດ ທີ່ມີແລ້ວ ເພື່ອໃຫ້ສອດຄ່ອງກັບສະພາບ ແລະ ການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໃນແຕ່ລະໄລຍະ.

## ໝວດທີ 4
## ສິດ ແລະ ພັນທະຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ຜູ້ນຳໃຊ້ບໍລິການເລກໝາຍໂທລະສັບ

**ມາດຕາ 11. ສິດຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຫ້ບໍລິການເລກໝາຍໂທລະສັບມີສິດ ດັ່ງນີ້:

1. ປິດເລກໝາຍໂທລະສັບຊົ່ວຄາວ ຫຼື ຖາວອນ ກໍລະນີທີ່ເລກໝາຍດັ່ງກ່າວບໍ່ມີການນຳໃຊ້ພາຍໃນເວລາ 6 ເດືອນ, ຕາມເງື່ອນໄຂ ທີ່ມີການນຳໃຊ້ເປັນປົກກະຕິ;
2. ປິດເລກໝາຍຖາວອນ ກໍລະນີທີ່ເລກໝາຍດັ່ງກ່າວ ບໍ່ມີການລົງທະບຽນການນຳໃຊ້ຖືກຕ້ອງຕາມລະບຽບ;
3. ໃຫ້ບໍລິການເລກໝາຍຕາມການອະນຸມັດ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

3.1. ປິດການນຳໃຊ້ເລກໝາຍໂທລະສັບມືຖືແບບເສຍຄ່າເຊົ່າລາຍເດືອນ, ກໍລະນີບໍ່ຊຳລະຄ່ານຳໃຊ້ ໃນເວລາ 3 ເດືອນຕໍ່ເນື່ອງ;

3.2. ປິດການນຳໃຊ້ຈາກລະບົບ ເລກໝາຍໂທລະສັບມືຖືແບບຕື່ມເງິນ, ກໍລະນີບໍ່ນຳໃຊ້ ພາຍໃນເວລາ 6 ເດືອນຕໍ່ເນື່ອງ;

3.3. ປິດການນຳໃຊ້ໂທອອກສຳລັບເລກໝາຍໂທລະສັບມືຖືແບບຕື່ມເງິນ ແລະ ໂທລະສັບຕັ້ງໂຕະແບບບໍ່ໃຊ້ສາຍ, ກໍລະນີ ບໍ່ຊຳລະຄ່ານຳໃຊ້ ພາຍໃນເວລາ 3 ເດືອນຕໍ່ເນື່ອງ;

3.4. ປິດການນຳໃຊ້ເລກໝາຍໂທລະສັບຕັ້ງໂຕະແບບໃຊ້ສາຍ, ກໍລະນີບໍ່ຊຳລະຄ່ານຳໃຊ້ ພາຍໃນເວລາ 3 ເດືອນຕໍ່ເນື່ອງ.

**ມາດຕາ 12. ພັນທະຂອງຜູ້ໃຫ້ບໍລິການເລກໝາຍໂທລະສັບ**

ຜູ້ໃຫ້ບໍລິການເລກໝາຍໂທລະສັບມີພັນທະ ດັ່ງນີ້:

1. ຂຶ້ນທະບຽນການນຳໃຊ້ເລກໝາຍໂທລະສັບໃຫ້ຖືກຕ້ອງ ແລະ ຄົບຖ້ວນ;
2. ນຳໃຊ້ເລກໝາຍໂທລະສັບໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
3. ຕິດຕາມກວດກາສະພາບການນຳໃຊ້ຂອງເລກໝາຍໂທລະສັບທີ່ໄດ້ເປີດນຳໃຊ້ແລ້ວ;
4. ສະໜອງຂໍ້ມູນກ່ຽວກັບເລກໝາຍໂທລະສັບໃຫ້ພາກສ່ວນອື່ນທີ່ກ່ຽວຂ້ອງ ກໍລະນີທີ່ມີເຫດການທີ່ກ່ຽວຂ້ອງກັບອາຊະຍາກຳ ປ້ອງກັນຊາດ ປ້ອງກັນຄວາມສະຫງົບ ໂດຍຜ່ານກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ;
5. ຊຳລະຄ່າທຳນຽມ ແລະ ຄ່າບໍລິການເລກໝາຍໂທລະສັບ ຕາມລະບຽບກົດໝາຍ ກ່ອນສິກປີງົບປະມານ;
6. ສະຫຼຸບ ແລະ ລາຍງານການນຳໃຊ້ເລກໝາຍໂທລະສັບ ໃຫ້ ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ເປັນແຕ່ລະງວດ 3 ເດືອນ, 6 ເດືອນ ແລະ ເປັນປີ;
7. ປະຕິບັດພັນທະອື່ນ ຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງ.

**ມາດຕາ 13. ສິດຂອງຜູ້ໃຊ້ບໍລິການເລກໝາຍໂທລະສັບ**

ຜູ້ໃຊ້ບໍລິການເລກໝາຍໂທລະສັບມີສິດ ດັ່ງນີ້:

1. ເລືອກໃຊ້ບໍລິການເລກໝາຍໂທລະສັບນຳບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
2. ເລືອກການບໍລິການ ແລະ ໄດ້ຮັບການບໍລິການຢ່າງມີຄຸນນະພາບ ແລະ ຍຸຕິທຳ;
3. ຮັບຮູ້ຂໍ້ມູນການນຳໃຊ້ເລກໝາຍໂທລະສັບ.

**ມາດຕາ 14. ພັນທະຂອງຜູ້ໃຊ້ບໍລິການເລກໝາຍໂທລະສັບ**

ຜູ້ໃຊ້ບໍລິການເລກໝາຍໂທລະສັບມີພັນທະ ດັ່ງນີ້:

1. ຂຶ້ນທະບຽນການນຳໃຊ້ເລກໝາຍໃຫ້ຖືກຕ້ອງ ແລະ ຄົບຖ້ວນ;

1. ຂຶ້ນທະບຽນການນຳໃຊ້ເລກໝາຍໃຫ້ຖືກຕ້ອງ ແລະ ຄົບຖ້ວນ;
2. ຮັບຜິດຊອບຊຳລະຄ່າເຊົ່າ ແລະ ຄ່າຊົມໃຊ້ບໍລິການ ຢ່າງເປັນປົກກະຕິ;
3. ກໍລະນີ ຊົມຄາດເລກໝາຍໂທລະສັບ ຕົກເຮ່ຍ, ເສຍຫາຍ ຕ້ອງແຈ້ງຕໍ່ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຢ່າງທັນການ;
4. ປະຕິບັດພັນທະອື່ນ ຕາມລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 15. ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການເລກໝາຍໂທລະສັບ**

ຫ້າມຜູ້ໃຫ້ບໍລິການເລກໝາຍໂທລະສັບມີພຶດຕິກຳ ດັ່ງນີ້:

1. ເປີດບໍລິການນຳໃຊ້ເລກໝາຍໂທລະສັບ ກ່ອນໄດ້ຮັບອະນຸຍາດ ຈາກ ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ;
2. ເປີດບໍລິການນຳໃຊ້ເລກໝາຍໂທລະສັບ ທີ່ບໍ່ຂຶ້ນທະບຽນການນຳໃຊ້ເລກໝາຍ;
3. ຈຳໜ່າຍເລກໝາຍໂທລະສັບຂອງຕົນ ໃນຕ່າງປະເທດ;
4. ບໍ່ສະແດງເລກໝາຍໂທລະສັບ.

**ມາດຕາ 16. ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການເລກໝາຍໂທລະສັບ**

ຫ້າມຜູ້ໃຊ້ບໍລິການເລກໝາຍໂທລະສັບມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ເລກໝາຍໂທລະສັບຕົນເອງໄປສ້າງຄວາມວຸ່ນວາຍ ປັ່ນປ່ວນ ອັນເປັນສາເຫດກໍ່ຄວາມບໍ່ສະຫງົບໃຫ້ແກ່ສັງຄົມ;
2. ນຳໃຊ້ເລກໝາຍໂທລະສັບຂອງຕົນໄປໃຫ້ບໍລິການຕໍ່ໂທອອກຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດນີ້ ເຊັ່ນ: ເສຍຄ່າທຳນຽມ ແລະ ຄ່າບໍລິການເລກໝາຍໂທລະສັບ ຢ່າງເປັນປົກກະຕິ, ປະຕິບັດລະບຽບກົດໝາຍ, ປະກອບສ່ວນໃນການປົກປັກຮັກສາເລກໝາຍໂທລະສັບ ແລະ ນຳໃຊ້ໄປທາງໃນທາງທີ່ຖືກຕ້ອງ, ມີປະໂຫຍດຕໍ່ສັງຄົມ ແລະ ການພັດທະນາປະເທດຊາດ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 18. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ ຂໍ້ຕົກລົງສະບັບນີ້ ເປັນຕົ້ນເຊັ່ນ ການເປີດບໍລິການນໍາໃຊ້ເລກໝາຍໂທລະສັບທຸກລະບົບ ກ່ອນໄດ້ຮັບອະນຸຍາດ ຈາກ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈະຖືກຮຽກເກັບຄືນເລກໝາຍໂທລະສັບ, ສຶກສາອົບຮົມ ປະຕິບັດວິໄນ, ປິດການນໍາໃຊ້, ປັບໃໝ ຫຼື ດໍາເນີນຄະດີຕາມກໍລະນີເບົາ ຫຼື ໜັກ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 19. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມໂທລະຄົມມະນາຄົມ, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຮັບຜິດຊອບໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້.

**ມາດຕາ 20. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ສິບຫ້າວັນ ນັບແຕ່ວັນ ທີ່ພິມລົງໃນຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີວ່າການ

ກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ

ຫຽມ ພົມມະຈັນ